# ໜັງສື ຢາໂກໂບ

ໃຈຄວາມສຳຄັນ　　ກິຈການທັງຫລາຍທີ່ສະແດງຄວາມເຊື່ອ

ຈຳນວນບົດ　　໔ ບົດ

## ວ່າດ້ວຍຜູ້ຂຽນ

ພວກຄຣູສອນສ່ວນຫລາຍເຂົ້າໃຈວ່າ ຢາໂກໂບຜູ້ຂຽນໜັງສືນີ້ ແມ່ນຢາໂກໂບຜູ້ເປັນນ້ອງຊາຍຂອງພຣະເຢຊູ (ຄາລາເຕັຍ ໑:໑໙) ໂດຍບໍ່ແມ່ນຢາໂກໂບຜູ້ ເປັນອັຄສາວົກ ແລະ ຜູ້ ເປັນ ນ້ອງຊາຍ ຂອງ ທ່ານ ໂຢຮັນ (ມັດທາຍ ໔:໒໑–໒໒) ເພາະອັຄສາວົກຜູ້ນີ້ໄດ້ຖືກກະສັດ ເຮໂລດຂ້າຕາຍກ່ອນແລ້ວ (ກິຈການ ໑໒:໑-໒)

ຢາໂກໂບຜູ້ຂຽນໜັງສືນີ້ ໄດ້ເປັນຄົນສຳຄັນໃນທ່າມກາງພວກ ຄຣິສຕະຈັກ ແລະຕາມເຣື່ອງປວັດສາດບອກໃຫ້ຮູ້ວ່າ ຢາໂກໂບເປັນ ຫົວ ໜ້າ ພ່ອຍ ຄຣິສຕະ ຈັກ ໃນ ກຸງເຢຣູຊາເລັມ ແລະ ເຄີຍ ໄດ້ ຮັບ ຄວາມ ເຄົາຣົບນັບຖືໃນທ່າມກາງພວກພີ່ນ້ອງດ້ວຍກັນ (ກິຈການ ໑໒:໑໗; ໑໕:໑໓–໒໑; ໒໑:໑໘) ເມື່ອພຣະເຢຊູຄືນພຣະຊົນມາຈາກຄວາມຕາຍ ກໍຊົງປາກົດໃຫ້ຢາໂກໂບນ້ອງຊາຍຂອງພຣະອົງໄດ້ເຫັນ (໑ ໂກລິນໂທ ໑໕:໗) ແລະເມື່ອທ່ານໂປໂລໄປກຸງເຢຣູຊາເລັມ ກໍໄດ້ພົບກັບຢາໂກໂບ ຜູ້ນີ້ດ້ວຍ (ຄາລາເຕັຍ ໑:໑໘–໑໙; ໒:໙–໑໑) ໃນຄັ້ງແຣກພວກນ້ອງ ຊາຍຂອງພຣະອົງບໍ່ໄດ້ເຊື່ອພຣະອົງ (ໂຢຮັນ ໗:໔) ແຕ່ຕໍ່ມາພາຍຫລັງ

ຢາໂກໂບຈຶ່ງໄດ້ເຊື່ອແລະຢຳເກງພຣະອົງ ຈົນຖືຕົວວ່າເປັນຂ້າໃຊ້ຂອງພຣະເຢຊູຄຣິດ (ຢາໂກໂບ ໑:໑)

## ວ່າດ້ວຍຜູ້ຮັບແລະເວລາທີ່ຂຽນ

ໜັງສືນີ້ ຢາໂກໂບໄດ້ຂຽນສົ່ງໄປຍັງພວກຢູດາທີ່ແຕກກະຈັດກະ-ຈາຍໄປຢູ່ຕ່າງປະເທດເພາະດ້ວຍຄວາມເຊື່ອໃນພຣະເຢຊູຄຣິດນັ້ນ ພວກຄຣູສອນສ່ວນຫລາຍເຂົ້າໃຈວ່າ ໜັງສືຢາໂກໂບນີ້ເປັນໜັງສືເຫລັ້ມຕົ້ນໃນພຣະຄັມພີໃໝ່ຊຶ່ງໄດ້ຂຽນຂຶ້ນກ່ອນໜັງສືຂ່າວປະເສີດທັງສີ່ ແລະ ໄດ້ຂຽນກ່ອນໜັງສືທັງໝົດຂອງທ່ານໂປໂລດ້ວຍ ຄືໄດ້ຂຽນຣະຫວ່າງປີ ຄ.ສ. ໔໔ ຫລື ໔໕ ທີ່ກຸງເຢຣູຊາເລັມ.

## ວ່າດ້ວຍເນື້ອຄວາມ

໑. ໜັງສືຢາໂກໂບປຽບທຽບກັບໜັງສືເຫລັ້ມອື່ນດັ່ງນີ້

| | | | | |
|---|---|---|---|---|
| ຢາໂກໂບ | ໑:໒ | ທຽບກັບ | ມັດທາຍ | ໕:໑໑ |
| ,, | ໑:໒໐ | ,, | ,, | ໕:໒໒ |
| ,, | ໒:໕ | ,, | ,, | ໕:໓ |
| ,, | ໓:໑໒ | ,, | ,, | ໗:໑໖ |
| ,, | ໔:໖ | ,, | ,, | ໑໘:໔ |
| ,, | ໔:໑໐ | ,, | ,, | ໕:໓–໔ |
| ,, | ໕:໑ | ,, | ລູກາ | ໖:໒໔ |
| ,, | ໕:໑໐ | ,, | ມັດທາຍ | ໕:໑໒ |

„ ໕:໑໒ „ „ ໕:໓໔–໓໗

„ ໕:໒ „ „ ໖:໑໙

## ໒. ໜັງສືປາໂກໂບສອນໃຫ້ຮູ້ວ່າ ຜູ້ຊຽບເປັນຄົນຢ່າງໃດ

ກ. ເພິ່ນບໍ່ຊອບຄົນຟັງຊື່ ໆ ໂດຍບໍ່ປະຕິບັດຕາມ ບົດ ໑:໒໓

ຂ. ເພິ່ນບໍ່ເຊື່ອໃຈຄົນທີ່ຮັ່ງມີ ບົດ ໑:໑໐; ໒:໒; ໕:໑໓

ຄ. ເພິ່ນຮັກແພງຄົນທີ່ທຸກຍາກ ບົດ ໒:໕

ງ. ເພິ່ນຊອບຜູ້ທີ່ຣະມັດຣະວັງລີ້ນຂອງຕົນ ບົດ ໓:໒–໖

ຈ. ເພິ່ນ ຍອມທົນຕໍ່ຄວາມທຸກລຳບາກເພາະ
ເຫັນແກ່ຄວາມຮັກໃນອົງພຣະຄຣິດ ບົດ ໑:໒; ໕:໑໑

ສ. ເພິ່ນຄອງຖ້າການສະເດັດມາຂອງພຣະເຢຊູຄຣິດ ບົດ ໕:໗

ຊ. ເພິ່ນເຊື່ອວ່າຄຳອ້ອນວອນຂອງຄົນທີ່ເຊື່ອດ້ວຍໃຈ ບໍຣິສຸດມີ
ອຳນາດຢ່າງແຮງກ້າແລະຣິດເດດຫລາຍ ບົດ ໕:໑໖

## ໓. ໜັງສືປາໂກໂບສອນໃຫ້ເຮົາຮູ້ຈັກເລື່ອງພຣະເຈົ້າ

ກ. ພຣະເຈົ້າຊົງເປັນຜູ້ບໍ່ປ່ຽນຄວາມຄິດ ບົດ ໑:໑໗

ຂ. ພຣະເຈົ້າຊົງປະທານທຸກສິ່ງ ບົດ ໑:໑໗

ຄ. ພຣະເຈົ້າຊົງບັງຄັບການທຳມາຫາກິນຂອງມະນຸດ ບົດ ໔:໑໕

## ໔. ສອນກ່ຽວເລື່ອງກິຈການ

ໃນທຸກ ໆ ສໄມມັກມີຄົນເວົ້າວ່າ ຄຳສອນຂອງທ່ານຢາໂກໂບ ໄດ້ຜິດກັບຄຳສອນຂອງທ່ານໂປໂລ ເພາະທ່ານຢາໂກໂບສອນວ່າ ມະນຸດ

ເຮົາຈະລອດພົ້ນດ້ວຍກິຈການ ແຕ່ທ່ານໂປໂລໄດ້ສອນວ່າ ມະນຸດເຮົາຈະລອດພົ້ນດ້ວຍຄວາມເຊື່ອເທົ່ານັ້ນ ຄວາມຈິງແລ້ວ ຄວາມເຫັນຂອງທັງສອງທ່ານນີ້ບໍ່ໄດ້ຜິດກັນເລີຍ ເປັນແຕ່ສອນເລິກຕື້ນໜາບາງກວ່າກັນເທົ່ານັ້ນ ຄືທ່ານຢາໂກໂບເນັ້ນຢາກສະແດງວ່າ ຖ້າເຊື່ອຊື່ໆ ບໍ່ມີການກະທຳ (ກິຈການ) ກໍເທົ່າກັບວ່າຄວາມເຊື່ອນັ້ນບໍ່ມີປະໂຍດຫຍັງ ເພາະເປັນການເຊື່ອແຕ່ປາກ (໒:໑໔,໑໖,໒໐) ສະນັ້ນຈຶ່ງເຫັນໄດ້ວ່າ ທ່ານຢາໂກໂບໄດ້ສອນແບບຄົນບູຮານ ຄືຢາກບອກວ່າ ຜູ້ທີ່ກາຍເປັນຄົນຊອບທັມ ກໍດ້ວຍ ກິຈ ການ ຂອງ ເຂົາ ເພາະ ກິຈ ການ ຄື ຜົນ ຂອງ ຄວາມ ເຊື່ອ (໒:໒໑-໒໔)

## ວ່າດ້ວຍຫົວຂໍ້ສຳຄັນແລະເປັນບົດຮຽນໄດ້

໑. ຄວາມຍິນດີໃນຄວາມທຸກລຳບາກ ບົດ ໑:໒,໑໒

໒. ການອ້ອນວອນດ້ວຍຄວາມເຊື່ອ ບົດ ໑:໕-໘; ໕:໑໕-໑໗

໓. ການຖືສາສນາທີ່ບໍຣິສຸດ ບົດ ໑:໒໗

໔. ຄົນຮັ່ງມີແລະຄົນທຸກຍາກ ບົດ ໑:໙-໑໑; ໒:໒-໗

໕. ຄວາມເຊື່ອແລະກິຈການທັງຫລາຍ ບົດ ໒:໑໔-໒໐

໖. ຄວາມບາບທີ່ມາຈາກລີ້ນ ບົດ ໓:໑-໑໒

໗. ສອນໃຫ້ກັບໃຈເສັຍໃໝ່ ບົດ ໔:໒-໑໐

໘. ການສະເດັດກັບມາຂອງພຣະເຢຊູ ບົດ ໕:໗-໘

໙. ຄວາມທຸກລຳບາກຂອງພວກບໍຣິສຸດ ບົດ ໕:໙-໑໑

໑໐. ການສະສ່ອຍດ້ວຍນ້ຳມັນ ບົດ ໕:໑໓–໑໕

໑໑. ການຍອມຮັບສາຣະພາບຜິດ ບົດ ໕:໑໖

໑໒. ພຣະປັນຍາຂອງພຣະເຈົ້າແລະ
ປັນຍາຂອງມະນຸດ ບົດ ໓:໑໓–໑໘

ວ່າດ້ວຍການຈັດຫົວຂໍ້ຂອງບົດ:

ບົດທີ ໑:໑–໑໕ ວ່າດ້ວຍການອົດທົນແລະການທົດລອງ

ບົດທີ ໑:໑໖–໒໗ ວ່າດ້ວຍການນັບຖືແລະປະຕິບັດຕາມພຣະທັມຄັມພີ

ບົດທີ ໒:໑–໑໓ ວ່າດ້ວຍຄວາມເຫັນແກ່ໜ້າ

ບົດທີ ໒:໑໔–໒໖ ວ່າດ້ວຍຄວາມເຊື່ອກັບການອະທັມ

ບົດທີ ໓:໑–໑໘ ວ່າດ້ວຍການບັງຄັບລີ້ນ

ບົດທີ ໔:໑–໑໗ ວ່າດ້ວຍຜິດຖຽງແລະການນິນທາກັນ

ບົດທີ ໕:໑–໖ ວ່າດ້ວຍບາບຂອງຄົນຮັ່ງມີ

ບົດທີ ໕:໗–໑໑ ໃຫ້ມີຄວາມພຽນຈົນພຣະອົງຈະສະເດັດມາ

ບົດທີ ໕:໑໒–໒໐ ວ່າດ້ວຍການສາບານຕົນ ການອ້ອນວອນແລະ
ການຊ່ອຍຜູ້ອື່ນໃຫ້ຮູ້ຈັກຄວາມພົ້ນ